# ດີໃຈທີ່ໄດ້ເຫັນເພື່ອນ

## ໂດຍ: ຫມູ ນິຣາວັນ

ພໍຍິນບິນຜ່ານຜ້າຍ　　ກາຍເມກທະຍານເຫາະ
ຈາກ Northwest Arkansas　　ຕໍ່ເຖິງຈຸດຫມາຍຕັ້ງ
ຈິດໃຈພາງຫັນຫ້າວ　　ໃກ້ເຖິງຄາວຊິພໍ້ຫມູ່
ຄືເພື່ອນຄຣູຮຸ່ນອ້າຍເອື້ອຍ　　ອາຈານພ້ອມທຸກຄົນ

ແສນດີໃຈເລີດລົ້ນ　　ອອກຍິນຍ່າງຈົນລືມເມັຽ
ເຮັ່ງຮີບລົງໄປຫາ　　ເພື່ອນຝູງຜູ່ຄອຍຕ້ອນ
ສີພັນດອນຜູ້ຄອຍຖ້າ　　ເພິ່ນຢືນຫົວຍິ້ມສົ່ງ
ພ້ອມທັງແກ້ວມະນີວົງ　　ເອື້ອຍຈັນສົດຢືນຢູ່ຂ້າງ　　ວັນທອງຍິ້ມສົ່ງສະຫາຍ

ນອກຈາກນັ້ນແມ່ນອ້າຍ　　ກາແກ້ວໃຫຍ່ ແສງສວັນ
ຢືນເປັນແຖວລຽນກັນ　　ຕາເຫຼືອບມອງບັນໃດເລື້ອນ
ຍິນສັນຍານສຽງເອີ້ນ　　ຫມໍວັນທອງຮ້ອງບອກຫມູ່
ສະຫາຍຫມູມາຮອດແລ້ວ　　ກັບນາງແກ້ວແມ່ສ່ຽວເຮົາ

ສຽງແຊວແຊວຍາດເວົ້າ　　ທັງກອດຮັດຈັບມືກັນ
ສາລະພັນຖາມເຖິງ　　ຊາບຂ່າວຄາວທາງບ້ານ
ສົນທະນາກັນສຽງແຈ້ວ　　ຄືກັບແກ້ວຄົບຫມູ່
ຫູຍັງອື້ກະພ່ອງນັ້ນ　　ຍ້ອນບິນຜ້າຍຜ່ານສູງ

ຈັບຈູງແຂນກັນເຕັ້ນ　　ຕອນເຫັນຫມູ່ມວນສະຫາຍ
ຖາມສະບາຍກັນສົມຄວນ　　ຈຶ່ງດ່ວນເຖິງລາງເລື້ອນ
ບອກເພື່ອນຝູງໃຫ້ລໍຖ້າ　　ຊິຫາຂອງຫີບຫໍ່

ພໍໄດ້ຂອງຄືບຖ້ວນ      ຊວນກັນເຄື້ອນອອກທາງ

ນ້ຳຕາຊຶມໜ້າຄ້າງ      ແສນຊຶມຊື່ນຍິນດີ
ຫ່າງກັນໃກນານປີ      ຈຶ່ງໄດ້ມາເຫັນໜ້າ
ມາເຫັນກັນຄາວນີ້      ເໝືອນກັບມີໂຊກໃຫຍ່
ສິ່ງທີ່ເຄີຍສູນຫາຍ ໄດ້ຄືນມາອີກຄັ້ງ      ຍ້ອນບຸນສ້າງແຕ່ກ່ອນມາ

ຕອນເຮົາຢືນຢູ່ຖ້ຳ      ຄືຈັກຈັ່ນເນືອງນອງ
ກ້ອງຖ່າຍວິເດໂອ      ໂອ້ເອ້ກັນເຣື່ອງຂອງຕ້ອນ
ສີພັນດອນຜູ້ສຽງແຈ້ວ      ແຊວຂຳຂັນຕລົກມ່ວນ
ຊວນໝູ່ຫົວໂຫ່ຮ້ອງ      ຈົນເຈັບທ້ອງຊັກງໍ

ຍາມຫຼາຍຄົນໄດ້ພົບພໍ້      ພາກັນຕໍ່ເຣື່ອງຊວນຫົວ
ເຕີະເຕີ່ນຂຳເນັ່ງນົວ      ຈົນວ່າຫົວແກມໄຫ້
ນ້ຳຕາໄຫຼຊຶມແກ້ມ      ແນມເຫັນຕາສີແດງກ່ຳ
ຖືວ່າເປັນບຸນກັມ      ໄດ້ມານຳຊຸກຍູ້      ຊູນ້າວຈ່ອງເຖິງ

ບໍ່ພໍເຫິງຄາວຖ້ຳ      ໂຊເຟີໃຫຍ່ທົ່ງສວັດ
ຈັດຂົນຄົນລຳລຽງ      ສຽງຟົດນັ້ນແຊວເວົ້າ
ເອົາຈາກອາຄານນີ້      ກໍເລີຍໄປອາຄານອື່ນ
ຄືນຢືນຖ້ຳຊ້ຳພັດຮູ້      ຄືບຸນຍູ້ ພ້ອມພ່ຳເນັ້ງ

ຟັງສຽງເຊັ້ງສຽງເວົ້າ      ຂອງສາມສ່ຽວສຽງທອງ
ຮຽນທ້ອງດຽວມານຳດຽວ      ເປັນສ່ຽວເທີຍແຕ່ຄາວນັ້ນ
ສຸດຕື້ນຕັນເມື່ອມາພໍ້      ກໍສົມພໍເພີ່ນເວົ້າຄ່ອງ
ຄືວັນທອງ ທ້າວບຸນຍູ້      ທ້າວໜູນັ້ນເປັນໝູ່ດຽວ

ນັບວ່າເຕັມໜຶ່ງຖ້ຽວ    ພໍຂືນສິ່ງທາງເດີນ
ເຮືອນຂັນເງິນຄືຈຸດໝາຍ    ບ່ອນທຸກຄົນໄດ້ເນົາຢັ້ງ
ຟັງສຽງຫົວສຽງຫ້າວ    ບໍ່ພໍຄາວກໍດັ້ນຮອດ
ຈອດຣົດແວນຟ້າວແລ່ນຈ້າວ    ທັກທາຍເພື່ອນໝູ່ທຸກຄົນ

ສຸດດີໃຈເລີດລົ້ນ    ທຸກຄົນຮ່ວມຍິນດີ
ທ້າວພູມີນາງພວງພັນ    ເປັນຄູ່ກັນແຕ່ຄາວພຸ້ນ
ດີໃຈຫຼາຍຈົນວາຍວຸ້ນ    ເຫັນໄພທູນເພື່ອນເກົ່າ
ໝໍວັນທອງກໍມົວເມົາ    ເວົ້າແຕ່ເຖິງກີຕ້າຣ໌    ຈົນລືມເຂົ້າເຊົ້າບໍ່ກິນ

ເກືອບເປັນວິນກະຜອງນັ້ນ    ຄືຝັນຕື່ນນອນລະເມີ
ເຈີະເພື່ອນຝູງຄາວຮຽນ    ເກີດວິ່ງວຽນເກືອບເຊລົ້ມ
ເຫັນເອື້ອຍຍົມມະລາຍິ້ມ    ເອື້ອຍຮິ່ມຊີມປຸງແຈ່ວ
ຍັງຝັງໃຈຢູ່ບໍ່ແລ້ວ    ທອງສອງເອື້ອຍຈັ່ງແມ່ນດີ

ໄປທາງເຮືອນຣົດພີ້    ແມ່ນເອື້ອຍໃຫຍ່ໂສດາ
ເພິ່ນບິນມາແຕ່ຫົວທີ    ຈັ່ງແມ່ນດີເຖິງຂັ້ນ
ເພັດສຸວັນ  ຄຳພອນພ້ອມ    ຊອມຫົວກັນເຮັດກະຢໍ່
ຫໍ່ກະຕຽມໄວ້ໃຫ້ແລ້ວ    ກະຕຽມພ້ອມເພື່ອທອດຈີນ

ຟັງສຽງແຕກວິ້ນໆ    ຫົວຂວັນເພື່ອນຜູ້ລືມຫຼິງ
ຄຳສວິງສາວງາມ    ເມື່ອຍແຕ່ຖາມ    "ແມ່ນໃຜເນາະ?"
ບັລຍາຍຈົນສຸດຂີ້    ພໍເປັນທາງຍັງບໍ່ຈື່
ສັງມາລືມກັນດີ້ໆ    ຫຼືນາງແກ້ງໃຫ້ວົກວົນ

ພາກັນສົນຄຳເວົ້າ    ທັງຖາມຂ່າວຫາຈັບມື
ຖືວ່າໃຈກົງກັນ    ຈຶ່ງອ່ວຍທັນເຫັນສົ້ນ
ມາອີ່ດູຕົນເພື່ອນ    ມີຫຼາຍຄົນບໍ່ໄດ້ຮ່ວມ
ໃຈໜຶ່ງຢາກມາຮວມ    ທາງຄອບຄົວພັດຈ່ອງທີ້ນ    ຂືນມາໄດ້ຍ້ານປາກສຽງ

ຂໍເລົ່າພໍພຽງນີ້    ຕອນທີແຮກເຮົາໄປເຖິງ
ເພື່ອນບັນເທີງເປັນຄຳກອນ    ປ້ອນກະວີ  ພໍດີມ້ວນ
ບົດສຳນວນ  ໄຂພໍດ້າມ    ໂຈະບົດຄວາມໄວ້ກ່ອນ
ລໍບົດກອນອີກເທື່ອໜ້າ    ຊິມາກ້ຽວກ່າວຜຍາ